**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ
ກົມສິ່ງແວດລ້ອມ

ເລກທີ 2136/ກຊສ.ກສລ

ນະຄອນຫຼວງວຽງຈັນ, ວັນທີ 28 JUL 2022

# ໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ

**ຮັບຮອງເອົາ ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ລວມທັງແຜນຄຸ້ມຄອງ ແລະ ຕິດຕາມ ກວດກາ ສິ່ງແວດລ້ອມ ຂອງໂຄງການສາຍສົ່ງໄຟຟ້າແຮງສູງ 500 ກິໂລໂວນ ຈາກໂຄງການຜະລິດໄຟຟ້າຈາກກັງຫັນລົມ 600 ເມກາວັດ ຫາຊາຍແດນ ລາວ-ຫວຽດນາມ ເມືອງດາກຈຶງ ແຂວງເຊກອງ ສະບັບເດືອນພຶດສະພາ 2022 ຂອງບໍລິສັດ ອິມແພກ ເອັນເນີຈີເອເຊຍ ດີວີລົບເມັ້ນ ຈຳກັດ**

- ອີງຕາມ ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ (ສະບັບປັບປຸງ), ເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012;
- ອີງຕາມ ດຳລັດວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ສະບັບເລກທີ 21/ລບ, ລົງວັນທີ 31 ມັງກອນ 2019;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການມອບສິດໃຫ້ກົມສິ່ງແວດລ້ອມ ເຊັນໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ສະບັບເລກທີ 3931/ກຊສ, ລົງວັນທີ 26 ກໍລະກົດ 2022.

**ກົມສິ່ງແວດລ້ອມ ຕົກລົງ:**

1. ຮັບຮອງເອົາ ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແບບລະອຽດ ລວມທັງແຜນການຄຸ້ມຄອງ ແລະ ຕິດຕາມ ກວດກາ ສິ່ງແວດລ້ອມ ຂອງໂຄງການສາຍສົ່ງໄຟຟ້າແຮງສູງ 500 ກິໂລໂວນ ຈາກໂຄງການຜະລິດໄຟຟ້າຈາກກັງຫັນລົມ 600 ເມກາວັດ ຫາຊາຍແດນ ລາວ-ຫວຽດນາມ ເມືອງດາກຈຶງ ແຂວງເຊກອງ ສະບັບເດືອນພຶດສະພາ 2022 ໂດຍແມ່ນ ບໍລິສັດ ອິມແພັກ ເອັນເນີຈີເອເຊຍ ດີວີລົບເມັ້ນ ຈຳກັດ ທີ່ເປັນເຈົ້າຂອງໂຄງການ;
2. ເຈົ້າຂອງໂຄງການ ຕ້ອງປະຕິບັດຢ່າງເຂັ້ມງວດ ເນື້ອໃນບົດບັນທຶກ ວ່າດ້ວຍ ບັນດາເງື່ອນໄຂທີ່ກຳນົດໄວ້ເປັນເອກະສານ ຊ້ອນທ້າຍຂອງໃບຢັ້ງຢືນສະບັບນີ້ ແລະ ຖ້າຫາກບໍ່ປະຕິບັດໄດ້ໃນເງື່ອນໄຂໃດໜຶ່ງ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ມີສິດພິຈາລະນາໂຈະ ຫຼື ຍົກເລີກ ໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ຕາມລະບຽບການ;
3. ໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມສະບັບນີ້ ມີຜົນສັກສິດນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ ແລະ ມີຜົນນຳໃຊ້ໄດ້ຕະຫຼອດໄລຍະເວລາຈັດຕັ້ງປະຕິບັດໂຄງການ.

**ຫົວໜ້າກົມ**

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ
ກົມສິ່ງແວດລ້ອມ

**ອຸ່ນເຮືອນ ໄຊຍະຈັກ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

## ບົດບັນທຶກ

## ວ່າດ້ວຍ ບັນດາເງື່ອນໄຂ ທີ່ກຳນົດໄວ້ເປັນເອກະສານຊ້ອນທ້າຍ ຂອງໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ຮັບຮອງບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ລວມທັງແຜນຄຸ້ມຄອງ ແລະ ຕິດຕາມ ກວດກາສິ່ງແວດລ້ອມ ສະບັບເດືອນພຶດສະພາ 2022 ຂອງໂຄງການສາຍສົ່ງໄຟຟ້າແຮງສູງ 500 ກິໂລໂວນ ຈາກໂຄງການຜະລິດໄຟຟ້າຈາກກັງຫັນລົມ 600 ເມກາວັດ ຫາ ຊາຍແດນ ລາວ-ຫວຽດນາມ ເມືອງດາກຈຶງ ແຂວງເຊກອງ

ເຈົ້າຂອງໂຄງການ (ຜູ້ພັດທະນາໂຄງການ) ຕ້ອງປະຕິບັດຕາມເງື່ອນໄຂ ດັ່ງລຸ່ມນີ້:

1. ກ່ອນການກໍ່ສ້າງໂຄງການ ຕ້ອງປະສານສົມທົບ ກັບອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການກ່ຽວຂ້ອງ ລວມທັງປະຊາຊົນທີ່ໄດ້ຮັບຜົນກະທົບໂດຍກົງ ເພື່ອປຶກສາຫາລືຕົກລົງເຫັນດີນຳກັນກ່ອນ ຈຶ່ງຄ່ອຍເລີ່ມລົງມືຈັດຕັ້ງປະຕິບັດກິດຈະກຳສຳຄັນຂອງໂຄງການ ເປັນຕົ້ນ: ແຜນການລະອຽດໃນການທົດແທນຄ່າເສຍຫາຍໃຫ້ແກ່ຜູ້ໄດ້ຮັບຜົນກະທົບ ແລະ ແຜນພັດທະນາຊຸມຊົນ - ແຜນພັດທະນາທ້ອງຖິ່ນ;
2. ຕ້ອງດຳເນີນການຫັນປ່ຽນເນື້ອທີ່ດິນປ່າໄມ້ ແລະ ປ່າໄມ້ ໃຫ້ສຳເລັດໃນໄລຍະກະກຽມສັນຍາສຳປະທານໂຄງການ, ໂດຍສົມທົບກັບກົມປ່າໄມ້ ກະຊວງກະສິກຳ ແລະ ປ່າໄມ້, ກົມທີ່ດິນ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງທັງຂັ້ນສູນກາງ ແລະ ທ້ອງຖິ່ນ ເກັບກຳຂໍ້ມູນຄືນລະອຽດ ກ່ອນຂໍອະນຸມັດການຫັນປ່ຽນພື້ນທີ່ດັ່ງກ່າວໄປສູ່ເປົ້າໝາຍການພັດທະນາໂຄງການ ຕາມລະບຽບການ;
3. ຮັບປະກັນ ໃຫ້ບັນດາຜູ້ຮັບເໝົາລວມ ແລະ ຜູ້ຮັບເໝົາຍ່ອຍ ຂອງໂຄງການ ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດຢ່າງເຂັ້ມງວດ ແລະ ຖືກຕ້ອງຄົບຖ້ວນທຸກມາດຕະການຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ສິ່ງແວດລ້ອມທຳມະຊາດ ທີ່ໄດ້ລະບຸໄວ້ໃນບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ລວມທັງແຜນຄຸ້ມຄອງ ແລະ ຕິດຕາມ ກວດກາສິ່ງແວດລ້ອມ ໃຫ້ໄດ້ດີ ແລະ ມີປະສິດທິຜົນ;
4. ຮັບຜິດຊອບທຸກຂໍ້ມູນທີ່ມີໃນບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ລວມທັງແຜນຄຸ້ມຄອງ ແລະ ຕິດຕາມ ກວດກາສິ່ງແວດລ້ອມ ສະບັບທີ່ຮັບຮອງ. ໃນກໍລະນີ ຫາກມີຜົນກະທົບຕໍ່ສິ່ງແວດລ້ອມ ເກີດຂຶ້ນໂດຍບໍ່ໄດ້ກຳນົດໄວ້ ໃນບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ລວມທັງແຜນຄຸ້ມຄອງ ແລະ ຕິດຕາມ ກວດກາສິ່ງແວດລ້ອມ ເຈົ້າຂອງໂຄງການ ຕ້ອງຮັບຜິດຊອບເພີ່ມເຕີມ ໃນການກຳນົດ ແລະ ຈັດຕັ້ງປະຕິບັດມາດຕະການຫຼຸດຜ່ອນບັນດາຜົນກະທົບເຫຼົ່ານັ້ນ ພ້ອມທັງ ກຳນົດໜ່ວຍງານຮັບຜິດຊອບ, ງົບປະມານ ແລະ ວັນເວລາຈັດຕັ້ງປະຕິບັດຢ່າງຖືກຕ້ອງ ແລະ ຊັດເຈນ;
5. ຮັບຜິດຊອບ ຕໍ່ຄວາມບໍ່ຖືກຕ້ອງ, ບໍ່ຄົບຖ້ວນ ຫຼື ຄວາມຜິດພາດ (ໂດຍເຈດຕະນາ ຫຼື ບໍ່ເຈດຕະນາ) ໃນການຄາດຄະເນ ງົບປະມານແຕ່ລະລາຍການ ທີ່ໄດ້ກຳນົດໄວ້ໃນບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ແລະ ແຜນຄຸ້ມຄອງ ແລະ ຕິດຕາມ ກວດກາສິ່ງແວດລ້ອມ ໂດຍຕ້ອງໄດ້ປຶກສາຫາລືກັບກັບ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອປັບປຸງແກ້ໄຂຄືນໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ ພ້ອມທັງສະໜອງງົບປະມານຕິດຕາມ ກວດກາການຈັດຕັ້ງປະຕິບັດແຜນຄຸ້ມຄອງດັ່ງກ່າວ ໂດຍຮັບປະກັນໃຫ້ທັນກັບເວລາ ຕາມຄວາມຮຽກຮ້ອງຕ້ອງການຂອງຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນສູນກາງ ແລະ ທ້ອງຖິ່ນ;
6. ອຳນວຍຄວາມສະດວກໃຫ້ແກ່ຄະນະວິຊາການ ຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນທ້ອງຖິ່ນ ແຕ່ລະຂັ້ນທີ່ກ່ຽວຂ້ອງ ເຂົ້າກວດກາພື້ນທີ່ໂຄງການ ແລະ ສາມາດເກັບຕົວຢ່າງຕ່າງໆ ໃນເວລາລົງຕິດຕາມ ກວດກາ ຕາມແຜນຄຸ້ມຄອງ ແລະ ຕິດຕາມ ກວດກາສິ່ງແວດລ້ອມ ຫຼື ນອກແຜນການດັ່ງກ່າວ ຖ້າເຫັນວ່າມີຄວາມຈຳເປັນ;

7. ດຳເນີນການຕິດຕາມ ກວດກາ ການຈັດຕັ້ງປະຕິບັດ ມາດຕະການຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ດ້ວຍຕົນເອງ ແລະ ລາຍງານຜົນການກວດກາ ໃຫ້ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ປະຈຳທຸກໆ 3 ເດືອນ, ໃນກໍລະນີເຫັນວ່າ ມີຄວາມສ່ຽງເກີດອຸປະຕິເຫດ, ເຫດການສຸກເສີນ ຍ້ອນສາເຫດເກີດມາຈາກການພັດທະນາ ໂຄງການຕົນທີ່ສ້າງຜົນກະທົບຮ້າຍແຮງຕໍ່ສິ່ງແວດລ້ອມ ຕ້ອງລາຍງານເຫດການດັ່ງກ່າວ ໂດຍທັນທີ ແລະ ໃນກໍລະນີມີເຫດການເກີດຂຶ້ນ ຕ້ອງລາຍງານເປັນລາຍລັກອັກສອນພາຍໃນ 24 ຊົ່ວໂມງ ພ້ອມທັງຮີບຮ້ອນດຳເນີນການປັບປຸງແກ້ໄຂຕົ້ນເຫດ ແລະ ຜົນກະທົບຕໍ່ເຫດການດັ່ງກ່າວຢ່າງທັນການ;
8. ໃນກໍລະນີມີການມອບໂອນໂຄງການຕົນໃຫ້ຜູ້ອື່ນ, ເຈົ້າຂອງໂຄງການຜູ້ໃໝ່ ກໍ່ຕ້ອງໄດ້ສືບຕໍ່ປະຕິບັດມາດຕະການຫລຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ, ງົບປະມານທີ່ກຳນົດໄວ້ໃນແຜນຄຸ້ມຄອງ ແລະ ຕິດຕາມ ກວດກາສິ່ງແວດລ້ອມ ລວມທັງ ບັນດາເງື່ອນໄຂທີ່ກຳນົດໄວ້ໃນໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ສະບັບນີ້;
9. ຖ້າຫາກມີການປ່ຽນແປງແລວໃໝ່ ຫຼື ປ່ຽນແປງຂະບວນການດຳເນີນໂຄງການ ເຈົ້າຂອງໂຄງການ ຕ້ອງສ້າງບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ລວມທັງແຜນຄຸ້ມຄອງ ແລະ ຕິດຕາມ ກວດກາສິ່ງແວດລ້ອມສະບັບໃໝ່ ສົ່ງໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ພິຈາລະນາຮັບຮອງ ຕາມລະບຽບຫຼັກການ.

ບົດບັນທຶກສະບັບນີ້ສ້າງຂຶ້ນ ລະຫວ່າງ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຊຶ່ງຕາງໜ້າໂດຍ ກົມສິ່ງແວດລ້ອມ ແລະ ບໍລິສັດ ອິມແພັກ ເອັນເນີຈີເອເຊຍ ດີວີລົບເມັ້ນ ຈຳກັດ (ເຈົ້າຂອງໂຄງການ) ເພື່ອເປັນບ່ອນອີງໃຫ້ເຈົ້າຂອງໂຄງການ ຈັດຕັ້ງປະຕິບັດບັນດາເງື່ອນໄຂຕ່າງໆ ຂອງໃບຢັ້ງຢືນຮັບຮອງບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ລວມທັງແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ທີ່ໄດ້ກຳນົດໄວ້ຢູ່ຂ້າງເທິງ ຢ່າງເຂັ້ມງວດ

ນະຄອນຫລວງວຽງຈັນ, ວັນທີ 8 ກໍລະກົດ 2022

| ຜູ້ອຳນວຍການ<br>ບໍລິສັດ ອິມແພັກ ເອັນເນີຈີເອເຊຍ ດີວີລົບເມັ້ນ ຈຳກັດ | ຫົວໜ້າກົມ |
|---|---|
| NARUT BOAKAJORN. | ອຸ່ນເຮືອນ ໄຊຍະຈັກ |